

# ບົດວິເຄາະການສຶກສາ: ການສຶກສາໄລຍະຍາວ ໃນການພັດທະນາຄູ

## ສິ່ງທີ່ໂດດເດັ່ນໃນບົດລາຍງານ: ການປະເມີນການລົງທຶນຂອງ ລັດຖະບານອົດສະຕຣາລີໃນການພັດທະນາຄູຢູ່ ສປປ ລາວ ບົດລາຍງານຊົ່ວຄາວສະບັບທີ 1

ຣົວລາລີ້ ຣໍລິ້ງສເວີດ, ເດັບບີ້ ວອງ, ອີລີຊາເບັດ ຄາຊິຕີ້, ພຣູ ແອນເດີສັນ ແລະ ແຈັດຊິກ້າ ທັອມສັນ

ລັດຖະບານປະເທດອົດສະຕຣາລີ
ກະຊວງການຕ່າງປະເທດ ແລະ ການຄ້າ

ACER

ບົດວິເຄາະການສຶກສານີ້ ແມ່ນໄດ້ຮັບການສະໜັບສະໜູນໂດຍລັດຖະບານອົດສະຕຣາລີ ແລະ ໄດ້ຮັບ ການຈັດຕັ້ງປະຕິບັດໂດຍ ສະພາຄົ້ນຄວ້າການສຶກສາອົດສະຕຣາລີ

© DFAT

# ບົດນຳ

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ ລາວ) ພວມດຳເນີນການປະຕິຮູບການສຶກສາຊັ້ນປະຖົມຄັ້ງຍິ່ງໃຫຍ່ ໂດຍໄດ້ຮັບການສະໜັບສະໜູນຈາກ ກະຊວງການຕ່າງປະເທດ ແລະ ການຄ້າຂອງລັດຖະບານປະເທດອົດສະຕຣາລີ (DFAT) ໂດຍຜ່ານແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າຮຽນສຳລັບການສຶກສາຂັ້ນພື້ນຖານ ໃນ ສປປ ລາວ (ແຜນງານບີຄວາ). ລັດຖະບານອົດສະຕຣາລີ ໄດ້ມອບໝາຍໜ້າທີ່ໃນການສຶກສາຄົ້ນຄວ້າກ່ຽວກັບວ່າ ແຜນງານບີຄວາໄດ້ສ້າງຄວາມແຕກຕ່າງໃນການປັບປຸງຄຸນນະພາບການສອນ ແລະ ຜົນການຮຽນຂອງນັກຮຽນຄືແນວໃດ. ການສຶກສາຄົ້ນຄວ້າຄັ້ງນີ້ແມ່ນເປັນສ່ວນໜຶ່ງຂອງຊຸດການສຶກສາຄົ້ນຄວ້າຫຼາຍປີທີ່ດຳເນີນການໂດຍ ແຜນງານການວິເຄາະການສຶກສາຂອງລັດຖະບານອົດສະຕຣາລີເພື່ອເປັນການສຶກສາບັນດາການຊ່ວຍເຫຼືອກ່ຽວກັບການພັດທະນາຄູ ແລະ ການຮຽນຮູ້ໃນສາມປະເທດໄດ້ແກ່: ສປປ ລາວ, ຕີມໍ-ເລສເຕ ແລະ ວານູອາຕູ.

ໃນປີ 2019, ຫຼັກສູດວິຊາພາສາລາວສະບັບປັບປຸງໃໝ່ ແລະ ວິຊາອື່ນໆໄດ້ຖືກນຳໃຊ້ສຳລັບຊັ້ນປະຖົມສຶກສາປີທີ 1 (ປ.1) ແລະ ຫຼັກສູດສະບັບປັບປຸງໃໝ່ນີ້ກຳລັງໄດ້ຮັບການພັດທະນາຂຶ້ນໄປເລື້ອຍໆຈົນຮອດຊັ້ນປະຖົມສຶກສາປີທີ 5. ຫຼັກສູດສະບັບປັບປຸງໃໝ່ແມ່ນໄດ້ສົ່ງເສີມການສອນທີ່ສະໜັບສະໜູນວິທີການຮຽນຮູ້ແບບເອົານັກຮຽນເປັນໃຈກາງ, ການຮຽນຮູ້ແບບເນັ້ນການປະຕິບັດຕົວຈິງ, ມີການປະເມີນຄວາມກ້າວໜ້າດ້ານການຮຽນຮູ້ຂອງນັກຮຽນ, ແລະ ວິທີການອອກສຽງໃນການສອນອ່ານ. ຄູສອນແມ່ນໄດ້ຮັບຄູ່ມືຄູ ແລະ ສື່ການຮຽນການສອນອື່ນໆ, ແລະ ຍັງໄດ້ຮັບການປະຖົມນິເທດກ່ຽວກັບຫຼັກສູດສະບັບປັບປຸງໃໝ່ແບບເຊິ່ງໜ້ານຳອີກ. ຢູ່ໃນເມືອງເປົ້າໝາຍຂອງແຜນງານບີຄວາ ແມ່ນມີທຶນການຊ່ວຍເຫຼືອດ້ານການສຶກສາຂັ້ນເມືອງເພື່ອອຳນວຍຄວາມສະດວກໃນການສະໜັບສະໜູນເພີ່ມເຕີມໃຫ້ແກ່ຄູປະຈຳການ ແລະ ບັນດາຜູ້ອຳນວຍການໂຮງຮຽນ ເຊັ່ນ: ການມີສ່ວນຮ່ວມຂອງກຸ່ມຄູ ແລະ ຜູ້ທີ່ມີສ່ວນຮ່ວມໃນການຮຽນການສອນ ແລະ ການນຳໃຊ້ເຄື່ອງມືຕ່າງໆສຳລັບການຮຽນຮູ້ທີ່ສາມາດເຮັດໄດ້ດ້ວຍຕົນເອງ.

ການຄົ້ນຄວ້າຄັ້ງນີ້ໄດ້ສ້າງໂອກາດໃນການກວດສອບຄຸນນະພາບຂອງການຮຽນການສອນ ແລະ ຜົນການຮຽນຮູ້ໜັງສືຂອງນັກຮຽນໃນ ສປປ ລາວ ໃນໄລຍະການເກັບກຳຂໍ້ມູນ 2 ຮອບ, ແລະ ອີກຮອບໜຶ່ງແມ່ນຈະຈັດອີກໃນເດືອນຕຸລາ ປີ 2022.




ບົດລາຍງານການປະເມີນຄວາມຕ້ອງການຂັ້ນພື້ນຖານ ໄດ້ເກັບເອົາຂໍ້ມູນກ່ຽວກັບ "ສະພາບການໃນປັດຈຸບັນ" ໃນປີ 2019 ກ່ອນທີ່ຈະມີການປ່ຽນແປງຫຼັກສູດແບບໃຫຍ່ຫຼວງ ແລະ ການເລີ່ມຕົ້ນຂອງການແຜ່ລະບາດຂອງພະຍາດໂຄວິດ-19. ບົດສະຫຼຸບສະບັບນີ້ໄດ້ນຳສະເໜີພາບລວມຂອງຜົນການຄົ້ນພົບ ແລະ ຄຳແນະນຳຈາກປີທີ 2 ຂອງການຄົ້ນຄວ້າ (2021), ພາຍຫຼັງສອງປີທີ່ແຜນງານບີຄວາໄດ້ສະໜັບສະໜູນການຈັດຕັ້ງປະຕິບັດຫຼັກສູດວິຊາພາສາລາວຂັ້ນ ປ.1 ສະບັບປັບປຸງໃໝ່.

# ວິທີການ

ບົດວິເຄາະການສຶກສາ: ການສຶກສາໄລຍະຍາວໃນການພັດທະນາຄູໃນ ສປປ ລາວ (ການຄົ້ນຄວ້າ) ໄດ້ຊອກຫາຄຳຕອບໃຫ້ແກ່ຄຳຖາມທີ່ວ່າ:

**ແຜນງານບີຄວາໄດ້ຊ່ວຍປັບປຸງຄຸນນະພາບການສອນ ແລະ ການຮຽນຮູ້ໜັງສືຂອງນັກຮຽນໃນ ສປປ ລາວ ໃນລະດັບໃດ?**

ຄຳຖາມທີ່ສຳຄັນສອງຄຳຖາມໄດ້ແກ່:

1. ຄຸນນະພາບການສອນມີການປ່ຽນແປງຫຼາຍປານໃດ ແລະ ປ່ຽນແປງແບບໃດຫຼັງຈາກໄດ້ຮັບການສະໜັບສະໜູນຈາກແຜນງານບີຄວາໃນການພັດທະນາຄູປະຈຳການ?
2. ຜົນການຮຽນຮູ້ໜັງສືຂອງນັກຮຽນມີການປ່ຽນແປງຫຼາຍປານໃດ ແລະ ປ່ຽນແປງແບບໃດພາຍຫຼັງການຈັດຕັ້ງປະຕິບັດຫຼັກສູດສະບັບປັບປຸງໃໝ່?

ການສຶກສາຄົ້ນຄວ້າໄດ້ນຳໃຊ້ແນວທາງແບບປະສົມປະສານ 2 ວິທີການໄດ້ແກ່ ວິທີການທີ່ເນັ້ນໜັກດ້ານປະລິມານ ແລະ ດ້ານຄຸນນະພາບ. ການຄົ້ນຄວ້າຄັ້ງນີ້ແມ່ນໄດ້ຕິດຕາມຄູສອນ ແລະ ຜູ້ອຳນວຍການໂຮງຮຽນໃນໄລຍະ 3 ຮອບຂອງການເກັບກຳຂໍ້ມູນ ໃນເວລາທີ່ຫຼັກສູດວິຊາພາສາລາວຂັ້ນ ປ.1 ສະບັບປັບປຸງໃໝ່ໄດ້ຮັບການຜັນຂະຫຍາຍຢູ່ໃນ 32 ເມືອງເປົ້າໝາຍຂອງແຜນງານບີຄວາ – ເຊິ່ງກວມເອົາຫຼາຍໆເມືອງທີ່ດ້ອຍໂອກາດທີ່ສຸດຂອງປະເທດ. ຕາຕະລາງຂ້າງລຸ່ມນີ້ສະແດງໃຫ້ເຫັນພາບລວມຂອງຕົວຢ່າງໃນປີ 2021.

| ເນັ້ນໜັກດ້ານປະລິມານ | ເນັ້ນໜັກດ້ານຄຸນນະພາບ |
|---|---|
| ການສຳຫຼວດໂຮງຮຽນ 355 ແຫ່ງ | ກໍລະນີສຶກສາໃນໂຮງຮຽນ 12 ແຫ່ງ |
| ການຕອບແບບສອບຖາມຂອງຜູ້ອຳນວຍການ 345 ຄົນ (ເປັນ ຍິງ 21% ແລະ ຊາຍ 79%) | ສຳພາດຜູ້ອຳນວຍການໂຮງຮຽນ, ຄູຂັ້ນ ປ.1 ແລະ ຄູນິເທດ ເປັນຈຳນວນ 33 ຄັ້ງ |
| ການຕອບແບບສອບຖາມຂອງຄູສອນຂັ້ນ ປ.1 363 ຄົນ (ເປັນ ຍິງ 54% ແລະ ຊາຍ 46%)<br>ນັກຮຽນຂັ້ນ ປ.1 3,120 ຄົນ (ເປັນ ຍິງ 47% ແລະ ຊາຍ 53%)<br>ການສອບເສັງນັກຮຽນຂັ້ນ ປ.1 2,212 ຄົນ (ເປັນ ຍິງ 51% ແລະ ຊາຍ 49%) | ການສັງເກດການສອນໃນຫ້ອງຮຽນວິຊາພາສາລາວຂັ້ນ ປ.1 ຈຳນວນ 30 ຄັ້ງ |

# ບົດສັງລວມສິ່ງທີ່ຄົ້ນພົບ

ໂດຍລວມແລ້ວ, ການລົງທຶນໃນການພັດທະນາຄູຂອງແຜນງານບີຄວາໄດ້ປະກອບສ່ວນເຂົ້າໃນການປັບປຸງຄຸນນະພາບການສອນໃຫ້ດີຂຶ້ນ, ແຕ່ຍັງບໍ່ທັນມີຜົນສະທ້ອນທີ່ເຫັນໄດ້ຊັດເຈນຕໍ່ຜົນການຮຽນຂອງນັກຮຽນເທື່ອ.

ຫຼັກສູດສະບັບປັບປຸງໃໝ່ຮຽກຮ້ອງໃຫ້ມີການປ່ຽນແປງຄັ້ງຍິ່ງໃຫຍ່ສຳລັບຄູສອນ ແລະ ຈຳເປັນຕ້ອງໄດ້ໃຫ້ເວລາ ແລະ ການສະໜັບສະໜູນເພີ່ມເຕີມກ່ອນທີ່ຄູສອນຈະສາມາດເຂົ້າໃຈໄດ້ຢ່າງເລິກເຊິ່ງ ແລະ ສາມາດນຳເອົາວິທີການໃໝ່ໆເຫຼົ່ານີ້ເຂົ້າໃຊ້ໃນການສອນຂອງພວກເຂົາ. ການປ່ຽນແປງໃນຄຸນນະພາບການສອນຍັງບໍ່ທັນຫຼາຍພຽງພໍທີ່ຈະສົ່ງຜົນກະທົບຕໍ່ກັບຜົນການຮຽນຮູ້ຂອງນັກຮຽນເທື່ອ.

## ຄຸນນະພາບການສອນ

**ຄຸນນະພາບການສອນມີການປ່ຽນແປງຫຼາຍປານໃດ ແລະ ປ່ຽນແປງແບບໃດຫຼັງຈາກໄດ້ຮັບການສະໜັບສະໜູນຈາກແຜນງານບີຄວາໃນການພັດທະນາຄູປະຈຳການ?**




**87% ຂອງຄູສອນໄດ້ເຂົ້າຮ່ວມການປະຖົມນິເທດຫຼັກສູດໃໝ່ທີ່ ເສີມສ້າງຄວາມຮູ້, ທັກສະນະຄະຕິ ແລະ ແນວທາງໃຫ້ແກ່ການສອນວິຊາພາສາລາວ.**

ຜົນໄດ້ຮັບໃນປີ 2021 ສະແດງໃຫ້ເຫັນວ່າ ຄູສອນຂັ້ນ ປ.1 ສ່ວນໃຫຍ່ (87%) ໄດ້ເຂົ້າຮ່ວມໃນການປະຖົມນິເທດຫຼັກສູດສະບັບປັບປຸງໃໝ່ຂອງກະຊວງສຶກສາທິການ ແລະ ກິລາ / ແຜນງານບີຄວາ. ໂດຍລວມແລ້ວ, ການພັດທະນາຄູປະຈຳການທີ່ສະໜັບສະໜູນໂດຍແຜນງານບີຄວານີ້ໄດ້ເສີມສ້າງຄວາມເຂັ້ມແຂງທາງດ້ານຄວາມຮູ້, ທັດສະນະຄະຕິ ແລະ ການສອນຂອງຄູ ຂັ້ນ ປ.1 ໃຫ້ສອດຄ່ອງກັບຫຼັກສູດວິຊາພາສາລາວສະບັບປັບປຸງໃໝ່. ເຖິງແມ່ນວ່າການປັບປຸງການສອນຂັ້ນ ປ.1 ອາດຈະຖືກກີດຂວາງໂດຍການແຜ່ລະບາດຂອງເຊື້ອພະຍາດໂຄວິດ-19 ກໍ່ຕາມ, ຜົນໄດ້ຮັບເຫຼົ່ານີ້ຍັງຄົງສອດຄ່ອງກັບຄາດໝາຍຂອງແຜນງານບີຄວາ ໂດຍອີງຕາມການຈັດຕັ້ງປະຕິບັດໃນໄລຍະ 1 ເຖິງ 2 ປີ. ຄູສອນແມ່ນນັບມື້ນັບຄຸ້ນເຄີຍກັບຫຼັກສູດສະບັບປັບປຸງໃໝ່, ທັງໄດ້ສະແດງໃຫ້ເຫັນເຖິງຄວາມໝັ້ນໃຈໃນການນຳໃຊ້ຊັບພະຍາກອນຕ່າງໆໃນການສອນ, ການເຂົ້າຮ່ວມກັບລະບົບການສະໜັບສະໜູນ ແລະ ຮູ້ຈັກນຳໃຊ້ຊັບພະຍາກອນຂອງຫຼັກສູດສະບັບປັບປຸງໃໝ່ນີ້ຫຼາຍຂຶ້ນ. ເຖິງຢ່າງໃດກໍຕາມ, ບົດລາຍງານຈາກແບບສອບຖາມ ແລະ ຜົນຂອງການສອບເສັງການຮັບຮູ້ພາສາລາວຂອງນັກຮຽນຂັ້ນ ປ.1 ໄດ້ຊີ້ໃຫ້ເຫັນວ່າ ຄູຍັງຕ້ອງການການສະໜັບສະໜູນທາງດ້ານວິຊາການໃນການສອນວິຊາພາສາລາວຫຼາຍກວ່າທີ່ເປັນຢູ່.

**ຄວາມຮູ້, ທັກສະນະຄະຕິ ແລະ ການສອນຂອງຄູມີການປ່ຽນແປງຫຼາຍປານໃດ ພາຍຫຼັງທີ່ໄດ້ຮັບການຝຶກອົບຮົມຄູປະຈຳການຈາກແຜນງານ?**




**ຄູສອນຂັ້ນ ປ.1 ໄດ້ສະແດງໃຫ້ເຫັນຄວາມຮັບຮູ້ທີ່ ເພີ່ມຂຶ້ນ ຕໍ່ວິທີການສອນແບບໃໝ່, ກິດຈະກຳການສອນທີ່ ເປີດກວ້າງ, ແລະ ໄດ້ມີ ສ່ວນຮ່ວມຫຼາຍຂຶ້ນກັບວິທີການປະເມີນເພື່ອປັບປຸງການຮຽນ.**

ສອງປີຫຼັງຈາກການນຳໃຊ້ຫຼັກສູດຂັ້ນ ປ.1 ສະບັບປັບປຸງໃໝ່ສຳລັບວິຊາພາສາລາວນີ້, ຄູສອນຂັ້ນ ປ.1 ໄດ້ສະແດງໃຫ້ເຫັນເຖິງຄວາມຮັບຮູ້ກ່ຽວກັບວິທີການສອນແບບໃໝ່, ໄດ້ເປີດກວ້າງກິດຈະກຳການຮຽນການສອນ ແລະ ການນຳໃຊ້ສື່ການຮຽນການສອນຕ່າງໆ, ແລະ ໄດ້ນຳໃຊ້ການປະເມີນເພື່ອປັບປຸງການຮຽນໃຫ້ເປັນສ່ວນໜຶ່ງຂອງການສອນວິຊາພາສາລາວນຳອີກ.

ການປ່ຽນແປງທາງບວກທີ່ໂດດເດັ່ນໃນລະຫວ່າງ ເດືອນພຶດສະພາ 2019 ແລະ ເດືອນເມສາ 2021 ທີ່ມີການຮັບຮູ້ ແລະ ລາຍງານໂດຍຜູ້ເຂົ້າຮ່ວມ, ຫຼື ສັງເກດເຫັນໂດຍນັກຄົ້ນຄວ້າປະກອບມີ:

- ຄູຮັບຮູ້ ແລະ ໝັ້ນໃຈຂຶ້ນໃນການນຳໃຊ້ວິທີການສອນທີ່ເອົານັກຮຽນເປັນໃຈກາງ, ໂດຍມີການປັບປຸງຄວາມເຂົ້າໃຈຕໍ່ກັບວິທີການເຫຼົ່ານີ້ໃນບາງສ່ວນ
- ການນຳໃຊ້ ແລະ ການອີງໃສ່ຄູ່ມືຄູ ແລະ ປຶ້ມແບບຮຽນສະບັບປັບປຸງໃໝ່ເຂົ້າໃນການກະກຽມບົດສອນຫຼາຍຂຶ້ນ
- ເນັ້ນໜັກໃສ່ກິດຈະກຳການຮຽນການສອນທີ່ສຸມໃສ່ການປະຕິບັດຕົວຈິງ, ລວມທັງການນຳໃຊ້ກິດຈະກຳກຸ່ມ ແລະ ກິດຈະກຳເປັນຄູ່ໃຫ້ຫຼາຍຂຶ້ນ (ນອກເໜືອໄປຈາກກິດຈະກຳທີ່ຮ່ວມເຮັດໝົດຫ້ອງ ແລະ ເຮັດຄົນດຽວ), ການນຳໃຊ້ກິດຈະກຳຕ່າງໆເຊັ່ນ: ການເລົ່າເລື່ອງ, ການຫຼິ້ນເກມ, ການຮ້ອງເພງ ແລະ ການສະແດງ, ພ້ອມທັງການນຳໃຊ້ຊັບພະຍາກອນການຮຽນການສອນໃຫ້ຫຼາກຫຼາຍຂຶ້ນ
- ຄວາມຮັບຮູ້ ແລະ ຄວາມໝັ້ນໃຈທີ່ເພີ່ມຂຶ້ນຕໍ່ກັບວິທີການປະເມີນ, ແລະ ການນຳໃຊ້ການປະເມີນເພື່ອປັບປຸງການຮຽນໃນຫ້ອງຮຽນຫຼາຍຂຶ້ນ.
- ການຈັດຊົ່ວໂມງສອນວິຊາພາສາລາວເປັນປົກກະຕິຂຶ້ນ ແຕ່ການຈັດຊົ່ວໂມງສອນວິຊາພາສາລາວໃຫ້ພຽງພໍໃນແຕ່ລະອາທິດຍັງຄົງເປັນບັນຫາຢູ່.

ຂອບເຂດທີ່ຕ້ອງການການກວດສອບເພີ່ມຕື່ມໃນປີສຸດທ້າຍຂອງການເກັບກຳຂໍ້ມູນໄດ້ແກ່ ການນຳໃຊ້ຍຸດທະສາດຂອງຄູໃນການສະໜັບສະໜູນຄວາມສະເໝີພາບບົດບາດຍິງ-ຊາຍ, ນັກຮຽນທີ່ປະຕິບັດໄດ້ດີ ແລະ ນັກຮຽນທີ່ມີຄວາມຫຍຸ້ງຍາກດ້ານການຮຽນ.

**ປັດໄຈອັນໃດແດ່ທີ່ສົ່ງເສີມ ຫຼື ກີດຂວາງຄູສອນໃນການນຳໃຊ້ຫຼັກສູດສະບັບປັບປຸງໃໝ່ເຂົ້າໃນການຮຽນການສອນຂອງພວກເຂົາ?**



ການສະໜັບສະໜູນຄູນິເທດໄດ້ **ເພີ່ມຂຶ້ນຢ່າງຫຼວງຫຼາຍ**ໃນປີ 2021.

ຜູ້ຕອບແບບສອບຖາມໄດ້ກຳນົດປັດໄຈຈຳນວນໜຶ່ງທີ່ສາມາດສົ່ງເສີມ ແລະ ຂັດຂວາງການປ່ຽນແປງວິທີການສອນ. ຜົນໄດ້ຮັບໃນປີ 2021 ສະແດງໃຫ້ເຫັນເຖິງການມີສ່ວນຮ່ວມໃນການຝຶກອົບຮົມວິຊາພາສາລາວທີ່ຫຼາຍຂຶ້ນ, ລວມທັງການທີ່ມີການພົວພັນຫຼາຍຂຶ້ນກັບກຸ່ມຄູ ແລະ ຜູ້ທີ່ມີສ່ວນຮ່ວມໃນການຮຽນການສອນ ແລະ ການຮຽນຮູ້ທີ່ສາມາດເຮັດໄດ້ດ້ວຍຕົນເອງ, ແລະ ການທີ່ຄູສອນໄດ້ຮັບການຊ່ວຍເຫຼືອທາງດ້ານວິຊາການລະດັບສູງໃນການສອນວິຊາພາສາລາວ ຈາກເພື່ອນຮ່ວມງານຂອງເຂົາເຈົ້າ. ຕົວຢ່າງ: ການສະໜັບສະໜູນຄູນິເທດໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍໃນປີ 2021.

ໃນຂະນະທີ່ຄູສອນໄດ້ຍົກຍ້ອງ ແລະ ໃຫ້ຄຸນຄ່າກັບການປະຖົມນິເທດນັ້ນ, ຫຼັກສູດສະບັບປັບປຸງໃໝ່ ແລະ ວິທີການຮຽນການສອນຍັງໄດ້ສະແດງໃຫ້ເຫັນເຖິງຄວາມແຕກຕ່າງມະຫາສານເມື່ອປຽບທຽບກັບຫຼັກສູດເກົ່າ. ຄວາມຮູ້ ແລະ ປະສົບການຂອງຄູໃນການສອນວິຊາພາສາລາວ ແລະ ຄວາມເຂົ້າໃຈໃນຫຼັກສູດສະບັບປັບປຸງໃໝ່ກາຍເປັນຂໍ້ທ້າທາຍທີ່ສຳຄັນ. ຄູສອນໄດ້ສັງເກດເຫັນວ່າ ພວກເຂົາຕ້ອງການພັດທະນາວິຊາຊີບຄູໃຫ້ຫຼາຍຂຶ້ນ. ຜູ້ຕອບແບບສອບຖາມຫຼາຍຄົນຮູ້ສຶກວ່າ ວິທີການສອນມີຄວາມທ້າທາຍຫຼາຍ, ທັງການປະຖົມນິເທດກໍສັ້ນເກີນໄປ, ພ້ອມທັງໄດ້ສະແດງໃຫ້ເຫັນເຖິງຄວາມຕ້ອງການໃນການພັດທະນາວິຊາຊີບຄູໃຫ້ຫຼາຍຂຶ້ນ, ໂດຍສະເພາະແມ່ນຫຼັກສູດວິຊາພາສາລາວ, ວິທີການຕ່າງໆໃນການສອນວິຊາພາສາລາວ ແລະ ການສອນພາສາລາວໃຫ້ເດັກທີ່ບໍ່ໄດ້ເວົ້າລາວເປັນພາສາທຳອິດ.

ໃນດ້ານປັດໄຈທີ່ກ່ຽວຂ້ອງກັບນັກຮຽນນັ້ນ, ຄູໄດ້ລາຍງານວ່າ ທັກສະດ້ານພາສາລາວທີ່ຕ່ຳຂອງນັກຮຽນຂັ້ນ ປ.1, ພ້ອມທັງການຂາດຮຽນທີ່ຂ້ອນຂ້າງສູງຂອງນັກຮຽນ ແລະ ການສະໜັບສະໜູນທີ່ຈຳກັດຈາກພໍ່ແມ່ ແມ່ນບັນຫາຫຼັກໃນການສອນພາສາລາວ.



## ຜົນການຮຽນຮູ້ໜັງສືຂອງນັກຮຽນ

**ຜົນການຮຽນຮູ້ໜັງສືຂອງນັກຮຽນມີການປ່ຽນແປງຫຼາຍປານໃດ ແລະ ປ່ຽນແປງແບບໃດພາຍຫຼັງການຈັດຕັ້ງປະຕິບັດຫຼັກສູດສະບັບປັບປຸງໃໝ່?**

ຜົນໄດ້ຮັບຈາກການທົດສອບການຮຽນຮູ້ພາສາລາວຂອງນັກຮຽນຂັ້ນ ປ.1 ໃນປີ 2021 ແມ່ນຂ້ອນຂ້າງໜ້າກັງວົນ. ເຖິງແມ່ນວ່າ ມັນຈະສະແດງໃຫ້ເຫັນເຖິງການປັບປຸງເລັກໃນຂອງຜົນການຮຽນຂອງນັກຮຽນໂດຍລວມຫຼັງຈາກການນໍາສະເໜີຫຼັກສູດຂັ້ນ ປ.1 ສະບັບປັບປຸງໃໝ່ນັ້ນ, ແຕ່ຜົນໄດ້ຮັບນີ້ແມ່ນຕ້ອງໄດ້ຮັບການພິຈາລະນາຢ່າງລະມັດລະວັງ ຍ້ອນວ່ານັກຮຽນຂັ້ນ ປ.1 ໜ້ອຍກວ່າ 1% ສາມາດເຮັດໄດ້ຕາມຄວາມຄາດຫວັງຂອງຫຼັກສູດສະບັບປັບປຸງໃໝ່. ຈຸດນີ້ແມ່ນສອດຄ່ອງກັບຜົນໄດ້ຮັບຈາກປີ 2019 ທີ່ພົບວ່າເກືອບ 25 ເປີເຊັນຂອງນັກຮຽນຂັ້ນ ປ.1 ທີ່ໄດ້ຮັບການທົດສອບໃນປີ 2021 ມີຄວາມສາມາດທີ່ຈໍາກັດ ຫຼື ບໍ່ມີທັກສະດ້ານພາສາລາວພຽງພໍສໍາລັບຂັ້ນ ປ.1 ເລີຍ.

**1% ຂອງນັກຮຽນຂັ້ນ ປ.1 ສາມາດບັນລຸຄາດໝາຍຂອງຫຼັກສູດວິຊາພາສາລາວຂັ້ນປ.1 ສະບັບປັບປຸງໃໝ່ໄດ້.**



**ນັກຮຽນ 1 ໃນ 4 ຄົນ ມີ ຄວາມສາມາດທີ່ຈໍາກັດ ຫຼື ບໍ່ມີທັກສະດ້ານພາສາລາວເລີຍ ສໍາລັບຂັ້ນ ປ.1.**

ສິ່ງທີ່ສັງເກດເຫັນໄດ້ແມ່ນການອອກສຽງມີຄວາມຫຍຸ້ງຍາກຫຼາຍສໍາລັບນັກຮຽນທົ່ວໄປ. ການອອກສຽງຕົວອັກສອນໄດ້ຖືກນໍາໃຊ້ໃນການສອບເສັງໃນປີ 2021, ເນື່ອງຈາກວ່າແນວທາງການອອກສຽງເປັນການປ່ຽນແປງທີ່ສໍາຄັນໃນການສອນອ່ານໃນຫຼັກສູດສະບັບປັບປຸງໃໝ່. ຂໍ້ມູນຈາກການທົດສອບສະແດງໃຫ້ເຫັນວ່າ ຄູຍັງບໍ່ມີຄວາມສາມາດໃນການສອນສຽງຕົວອັກສອນໄດ້ຢ່າງມີປະສິດທິຜົນ.

ໃນປີ 2019 ແລະ ປີ 2021, ແຂວງຜົ້ງສາລີມີອັດຕາສ່ວນຂອງນັກຮຽນທີ່ມີຜົນການຮຽນຕໍ່າສູງທີ່ສຸດ (48% ໃນປີ 2021), ໃນຂະນະທີ່ແຂວງເຊກອງມີອັດຕາສ່ວນຂອງນັກຮຽນທີ່ມີຜົນການຮຽນດີສູງທີ່ສຸດ (31% ໃນປີ 2021). ຄວາມແຕກຕ່າງນີ້ໄດ້ຂະຫຍາຍເພີ່ມຕື່ມເລື້ອຍໆໃນໄລຍະ 2 ປີນີ້.




**ແຂວງຜົ້ງສາລີ ມີ ນັກຮຽນທີ່ມີຜົນການຮຽນຕໍ່າຫຼາຍທີ່ສຸດ ແລະ ແຂວງເຊກອງມີນັກຮຽນທີ່ມີຜົນການຮຽນດີຫຼາຍທີ່ສຸດ.**

ເຖິງແມ່ນວ່າ ບໍ່ມີຄວາມແຕກຕ່າງລະຫວ່າງຍິງ-ຊາຍໃນປີ 2019, ແຕ່ໃນປີ 2021 ນັກຮຽນຍິງມີຜົນການຮຽນທີ່ດີກວ່ານັກຮຽນຊາຍ, ທັງໂດຍລວມ ແລະ ໃນແຂວງຕ່າງໆເຄິ່ງປະເທດ (ເຊກອງ, ສາລະວັນ ແລະ ສະຫວັນນະເຂດ). ໂດຍສະເພາະແຂວງເຊກອງນີ້, ນັກຮຽນຍິງທີ່ມີຜົນການຮຽນດີມີຈໍານວນຫຼາຍກວ່ານັກຮຽນຊາຍເຖິງ 2 ເທົ່າ. ອັດຕາສ່ວນຂອງນັກຮຽນຊາຍທີ່ມີຜົນການຮຽນຕໍ່າແມ່ນຄ້າຍຄືກັນໃນທັງສອງປີ.



**ເຖິງແມ່ນວ່າ ບໍ່ມີຄວາມແຕກຕ່າງລະຫວ່າງ ຍິງ-ຊາຍ ໃນ ປີ 2019, ແຕ່ໃນປີ 2021 ນັກຮຽນຍິງມີຜົນການຮຽນດີກວ່ານັກຮຽນຊາຍ.**

**ຫຼັກສູດສະບັບປັບປຸງໃໝ່ມີອິດທິພົນຕໍ່ທັດສະນະຄະຕິ ແລະ ນິດໄສໃນການຮຽນຮູ້ຂອງນັກຮຽນຄືແນວໃດ?**

ການຄົ້ນພົບກ່ຽວກັບທັດສະນະຄະຕິ ແລະ ນິດໄສໃນການຮຽນຮູ້ຂອງນັກຮຽນແມ່ນໄດ້ມາຈາກຂໍ້ມູນການຮັບຮູ້ຂອງຄູ ແລະ ການສັງເກດການສອນທີ່ສຸມໃສ່ສະພາບແວດລ້ອມໃນຫ້ອງຮຽນ. ຜົນໄດ້ຮັບໃນປີ 2021 ຊີ້ໃຫ້ເຫັນເຖິງການເພີ່ມຂຶ້ນຂອງຄວາມມ່ວນຊື່ນໃນການຮຽນວິຊາພາສາລາວເລັກນ້ອຍ ແລະ ມີການພັດທະນາດ້ານວັດທະນະທໍາໃນຫ້ອງຮຽນ, ຄວາມສໍາພັນ ແລະ ການພົວພັນລະຫວ່າງຄູກັບນັກຮຽນຢ່າງສະໝໍ່າສະເໝີ.

**ການປ່ຽນແປງຂອງຄຸນນະພາບການສອນມີຄວາມກ່ຽວຂ້ອງກັບການປ່ຽນແປງຂອງຜົນການຮຽນຮູ້ໜັງສືຂອງນັກຮຽນບໍ່?**

ຂໍ້ມູນທີ່ເກັບກຳໃນປີ 2021 ສະແດງໃຫ້ເຫັນວ່າ ຄວາມສອດຄ່ອງກັນລະຫວ່າງ ວິທີການສອນ ແລະ ຜົນການຮຽນຂອງນັກຮຽນແມ່ນຍັງຕໍ່າ. ນີ້ອາດຈະເປັນໂຕບົ່ງບອກວ່າ ການປ່ຽນແປງວິທີການສອນຂອງຄູໃນຕອນຕົ້ນສົກຮຽນ ຍັງບໍ່ທັນພຽງພໍທີ່ຈະສົ່ງຜົນກະທົບຕໍ່ກັບການຮຽນຮູ້ຂອງນັກຮຽນ.

ເຖິງຢ່າງໃດກໍ່ຕາມ, ຜົນໄດ້ຮັບຂອງການຄົ້ນຄວ້າໃນປີ 2021 ຊີ້ໃຫ້ເຫັນວ່າ, ປັດໄຈບາງຢ່າງຂອງນັກຮຽນ ແລະ ຄູມີຄວາມກ່ຽວຂ້ອງກັບຜົນການຮຽນຂອງນັກຮຽນ ຂັ້ນ ປ.1. ປັດໄຈຕ່າງໆຂອງນັກຮຽນທີ່ເຮັດໃຫ້ຜົນການສອບເສັງຂັ້ນ ປ.1 ຂອງນັກຮຽນໄດ້ດີຂຶ້ນໄດ້ແກ່ ການເຂົ້າຮຽນຂອງນັກຮຽນໃນຊັ້ນອະນຸບານ ຫຼື ລະດັບການສຶກສາກ່ອນໄວຮຽນ, ພາສາແມ່ຂອງນັກຮຽນເປັນພາສາລາວ-ໄຕ, ການໄດ້ຮັບຟັງນິທານຕ່າງໆ, ການມີສື່ໃນການຮຽນຮູ້ວິຊາພາສາລາວຫຼາຍຂຶ້ນໃນບ້ານເຮືອນ ແລະ ຊຸມຊົນ, ຄວາມຮັ່ງມີຂອງຄອບຄົວທີ່ສູງຂຶ້ນ ແລະ ລະດັບການຂາດຮຽນທີ່ຫຼຸດລົງ.

ຄູສອນທີ່ເປັນເພດຍິງ, ສູງອາຍຸ, ມີປະສົບການຫຼາຍ ແລະ ມີສະຖານະຄວາມເປັນຄູທີ່ຖາວອນ ມີແນວໂນ້ມທີ່ຈະສົ່ງຜົນໃຫ້ນັກຮຽນຂອງເຂົາເຈົ້າເຮັດໄດ້ດີກວ່າໃນການສອບເສັງຂັ້ນ ປ.1. ຄວາມສອດຄ່ອງກັນລະຫວ່າງພາສາແມ່ຂອງນັກຮຽນ ແລະ ຄູສອນ ໂດຍສະເພາະຖ້າເປັນພາສາລາວ-ໄຕ ແມ່ນມີຄວາມກ່ຽວພັນສູງກັບຜົນການສອບເສັງຂອງນັກຮຽນ. ແຕກຕ່າງກັບປີ 2019, ໃນປີ 2021 ການສອນພາສາລາວຫຼາຍຊົ່ວໂມງຕໍ່ອາທິດ ແມ່ນສາມາດສົ່ງຜົນກະທົບໃນທາງບວກຕໍ່ກັບຜົນການສອບເສັງຂັ້ນ ປ.1 ຂອງນັກຮຽນນຳອີກ.



# ບົດສະຫຼຸບ ແລະ ຄຳແນະນຳ

ການຄົ້ນພົບທີ່ສຳຄັນຈາກບົດລາຍງານປະເມີນຄວາມຕ້ອງການຂັ້ນພື້ນຖານ ແລະ ບົດລາຍງານຊົ່ວຄາວຄັ້ງທີ 1 ນີ້ຊີ້ໃຫ້ເຫັນເຖິງຄວາມສຳພັນທີ່ຊັບຊ້ອນລະຫວ່າງ ສະພາບການຕົວຈິງ, ຫຼັກສູດ ແລະ ການສອນ, ແລະ ບົດບາດທີ່ສຳຄັນຂອງຄູ ແລະ ພໍ່ແມ່ຜູ້ປົກຄອງໃນການສະໜັບສະໜູນເດັກນ້ອຍໃນການເລີ່ມຕົ້ນເຂົ້າໂຮງຮຽນ, ໂດຍສະເພາະເດັກນ້ອຍຈຳນວນຫຼາຍແມ່ນບໍ່ໄດ້ກະກຽມສຳລັບການຮຽນຂັ້ນ ປ.1. ຄຳແນະນຳສຳລັບຜູ້ສ້າງນະໂຍບາຍແມ່ນ:

## 1. ສຸມໃສ່ການສ້າງທັກສະການເວົ້າພາສາລາວຂອງນັກຮຽນໃນພາສາລາວ

ຜົນຂອງການຮຽນຮູ້ພາສາລາວໃນປີ 2021 ຊີ້ໃຫ້ເຫັນວ່າມາດຕະຖານຂອງຫຼັກສູດວິຊາພາສາລາວສະບັບປັບປຸງໃໝ່ອາດຈະສູງເກີນໄປສຳລັບນັກຮຽນຂັ້ນ ປ.1 ສ່ວນໃຫຍ່. ນັກຮຽນຫຼາຍຄົນມີທັກສະທາງການປາກເວົ້າພາສາລາວທີ່ຈຳກັດຫຼາຍ. ພວກເຮົາຕ້ອງໃຊ້ເວລາຫຼາຍຂຶ້ນໃນການສອນນັກຮຽນໃຫ້ເວົ້າ ແລະ ເຂົ້າໃຈພາສາລາວໄດ້ຢ່າງຄ່ອງແຄ້ວພຽງພໍ ກ່ອນທີ່ຈະເລີ່ມຮຽນອ່ານ ແລະ ຂຽນພາສາລາວໄດ້. ນັກຮຽນຕ້ອງການໂອກາດໃນການຮຽນພາສາລາວ ແລະ ການກະຕຸ້ນທີ່ເຂັ້ມຂຸ້ນ ເພື່ອເປັນການປັບປຸງສະຕິປັນຍາຂອງພວກເຂົາ (ຄວາມຊົງຈຳໄລຍະສັ້ນ ແລະ ຄວາມສາມາດໃນການບໍລິຫານຈັດການ) ກ່ອນທີ່ເຂົາເຈົ້າຈະພ້ອມສຳລັບຫຼັກສູດຂັ້ນ ປ.1 ນີ້. ມັນຄົງຈະເປັນໄປບໍ່ໄດ້ທີ່ໂຮງຮຽນກ່ອນໄວຮຽນ / ອະນຸບານໃນປັດຈຸບັນຈະສາມາດສຸມໃສ່ສິ່ງທີ່ກ່າວມານີ້ໄດ້, ແລະ ມັນກໍຈຳເປັນຕ້ອງມີແຜນການອື່ນເພື່ອຮັບມືກັບບັນຫາດັ່ງກ່າວ.



© DFAT

## 2. ຈັດຕັ້ງປະຕິບັດການຝຶກອົບຮົມວິຊາຊີບຢ່າງຕໍ່ເນື່ອງໃຫ້ແກ່ຄູສອນ, ຜູ້ອຳນວຍການໂຮງຮຽນ ແລະ ຄູນິເທດ.

ເຖິງວ່າຈະມີຫຼາຍຢ່າງທີ່ຊີ້ໃຫ້ເຫັນການປັບປຸງໃນວິທີການສອນກໍ່ຕາມ, ແຕ່ຄູຍັງເຫັນວ່າ ການສອນພາສາລາວມີຄວາມຫຍຸ້ງຍາກ ແລະ ສິ່ງນີ້ກໍໄດ້ສະທ້ອນໃຫ້ເຫັນໃນຜົນການຮຽນຂອງນັກຮຽນທີ່ຂ້ອນຂ້າງຕ່ຳ. ມັນຈຳເປັນຕ້ອງມີການຝຶກອົບຮົມວິຊາຊີບຢ່າງຕໍ່ເນື່ອງ ແລະ ການສະໜອງສື່ການຮຽນການສອນໃຫ້ແກ່ຄູສອນ, ຜູ້ອຳນວຍການໂຮງຮຽນ ແລະ ຄູນິເທດ ເພື່ອເປັນການຂະຫຍາຍອົງຄວາມຮູ້ ແລະ ການນຳໃຊ້ຍຸດທະສາດການສອນພາສາລາວຢ່າງມີປະສິດທິພາບ. ໂດຍສະເພາະແມ່ນການສອນພາສາລາວໃຫ້ຜູ້ເວົ້າທີ່ບໍ່ເວົ້າພາສາລາວ, ວິທີການສອນໃນຫ້ອງຮຽນທີ່ປະກອບດ້ວຍນັກຮຽນຊົນເຜົ່າ ແລະ ກຸ່ມພາສາທີ່ຫຼາກຫຼາຍ, ແລະ ຄວາມເຂົ້າໃຈທາງດ້ານການອອກສຽງທີ່ດີຂຶ້ນ, ມັນຈຶ່ງກາຍເປັນຈຸດສຸມທີ່ສຳຄັນໃນການຝຶກອົບຮົມໃນອະນາຄົດ. ແຜນງານການຝຶກອົບຮົມວິຊາຊີບທີ່ມີຂະໜາດນ້ອຍ, ມີເປົ້າໝາຍແນ່ນອນ ແລະ ເປັນປົກກະຕິ ສາມາດເສີມສ້າງ ແລະ ເຊື່ອມໂຍງເອົາຜົນປະໂຫຍດຈາກການປັບປຸງວິທີການສອນທີ່ມີການພັດທະນາສະເໝີມາ. ການສ້າງໂອກາດ ແລະ ຄວາມສາມາດໃນການເຂົ້າເຖິງສື່ການຮຽນການສອນໃຫ້ຄູນິເທດ ແລະ ຜູ້ອຳນວຍການ ເພື່ອເປັນການຈັດຕັ້ງກຸ່ມຄູ ແລະ ຜູ້ທີ່ມີສ່ວນຮ່ວມໃນການຮຽນການສອນໃໝ່ໆ ພ້ອມທັງການສ້າງຄວາມເຂັ້ມແຂງໃຫ້ແກ່ກຸ່ມຄູ ແລະ ຜູ້ທີ່ມີສ່ວນຮ່ວມໃນການຮຽນການສອນທັງກຸ່ມໃໝ່ ແລະ ກຸ່ມທີ່ມີຢູ່ແລ້ວອາດຈະເປັນມາດຕະການທີ່ມີປະສິດທິພາບຫຼາຍກວ່າແຜນງານການຝຶກອົບຮົມຂະໜາດໃຫຍ່ໆໄດ້.

## 3. ເປົ້າໝາຍຂອງມາດຕະການສຳລັບນັກຮຽນ ແລະ ເດັກຊາຍທີ່ມີຜົນການຮຽນຕ່ຳທີ່ສຸດ.

ມາດຕະການເພີ່ມເຕີມຕໍ່ກັບນັກຮຽນ ແລະ ຄູສອນເພື່ອສະໜັບສະໜູນເດັກຊາຍ ແລະ ນັກຮຽນທີ່ມີຜົນການຮຽນຕ່ຳທີ່ສຸດຕ້ອງໄດ້ຮັບການພິຈາລະນາ. ໃນຂະນະທີ່ການຄົ້ນຄວ້າຄັ້ງນີ້ໄດ້ສ້າງຈຸດເລີ່ມຕົ້ນເພື່ອໃຫ້ສາມາດເຂົ້າໃຈບາງປັດໄຈທີ່ສຳຄັນສຳລັບຜົນການຮຽນທີ່ຕ່ຳ, ແຕ່ກໍແນະນຳໃຫ້ມີການຄົ້ນຄວ້າເພີ່ມເຕີມກ່ຽວກັບຜົນການຮຽນທີ່ບໍ່ດີຂອງເດັກຊາຍ ແລະ ນັກຮຽນໃນແຂວງຜົ້ງສາລີ.

### 4. ສ້າງການຮັບຮູ້ ແລະ ສຶກສາອົບຮົມ ພໍ່ແມ່ຜູ້ປົກຄອງ ແລະ ໃນຊຸມຊົນກ່ຽວກັບບົດບາດທີ່ເຂົາເຈົ້າສາມາດເຮັດໄດ້ໃນການສົ່ງເສີມຄວາມພ້ອມຂອງນັກຮຽນໃນການເຂົ້າຮຽນ ແລະ ການໃຫ້ໂອກາດເດັກທີ່ພິການໄດ້ຮຽນຮູ້.

ພໍ່ແມ່ມີບົດບາດໃນການສ້າງສິ່ງແວດລ້ອມທີ່ເປັນໂຕກະຕຸ້ນໃຫ້ລູກຂອງຕົນ ແລະ ພັດທະນາຄວາມສາມາດໃນການປາກເວົ້າຕັ້ງແຕ່ນ້ອຍ, ເຖິງແມ່ນວ່າຈະຢູ່ໃນສະພາບທີ່ມີການເວົ້າພາສານັ້ນໆໜ້ອຍກໍ່ຕາມ. ຄູສອນ ແລະ ຜູ້ອໍານວຍການຕ້ອງການຄໍາແນະນໍາກ່ຽວກັບວິທີການເຮັດວຽກກັບພໍ່ແມ່ຜູ້ປົກຄອງ ແລະ ຊຸມຊົນເພື່ອປັບປຸງການມີສ່ວນຮ່ວມຂອງພໍ່ແມ່ໃນການຮຽນຮູ້ຂອງເດັກ, ທັງຢູ່ເຮືອນ ແລະ ໃນໂຮງຮຽນ. ຄູສອນ, ຜູ້ອໍານວຍການ, ພໍ່ແມ່ ແລະ ຜູ້ເບິ່ງແຍງເດັກຍັງຕ້ອງມີຄວາມຮູ້ ແລະ ຄວາມສາມາດໃນການລ້ຽງດູເດັກພິການຢູ່ໃນໂຮງຮຽນ ແລະຢູ່ໃນບ້ານຢ່າງມີປະສິດທິພາບ. ການສຶກສາອົບຮົມຂອງລັດຖະບານສາມາດຊ່ວຍເສີມວຽກງານນີ້ໄດ້.

ຖ້າຕ້ອງການອ່ານບົດລາຍງານນີ້ແບບສະບັບເຕັມ, ກະລຸນາເຂົ້າໄປທີ່ເວັບໄຊ້ຂອງລັດຖະບານອົດສະຕຣາລີ. *ຂໍ້ມູນທີ່ແບ່ງແຍກໃຫ້ເຫັນແຕ່ລະເພດແມ່ນຢູ່ໃນບົດລາຍງານສະບັບເຕັມ.

© ລິຂະສິດຂອງ ປະເທດອົດສະຕຣາລີ, ທີ່ຕາງໜ້າໂດຍ ກະຊວງການຕ່າງປະເທດ ແລະ ການຄ້າ.

ເອກະສານອ້າງອີງທີ່ແນະນໍາ:

Hollingsworth, H., Wong, D., Cassity, E., Anderson, P., & Thompson, J. (2022).

ສິ່ງທີ່ໂດດເດັ່ນໃນບົດລາຍງານ: ການປະເມີນການລົງທຶນຂອງປະເທດອົດສະຕຣາລີໃນການພັດທະນາຄູຢູ່ ສປປ ລາວ: ບົດລາຍງານກາງພາກສະບັບທີ 1. ສະພາຄົ້ນຄວ້າການສຶກສາອົດສະຕຣາລີ.

